ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ

ເລກທີ/1239 ກຍ

ນະຄອນຫຼວງວຽງຈັນ, ລົງວັນທີ 13 ຕຸລາ 2021

# ຄຳແນະນຳ
# ກ່ຽວກັບການສ້າງ ແລະ ປັບປຸງກົດໝາຍ
# ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19

- ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ ສະບັບເລກທີ 411/ນຍ, ລົງວັນທີ 10 ພະຈິກ 2016;
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19(COVID-19);
- ອີງຕາມການຕົກລົງຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພຶດສະພາ 2021.

ໃນໄລຍະຜ່ານມາ ການສ້າງ ແລະ ປັບປຸງກົດໝາຍ ຂອງບັນດາກະຊວງ, ອົງການ ທີ່ຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ໄດ້ດຳເນີນຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ນັບແຕ່ຂັ້ນຕອນການກະກຽມ ໂດຍມີການແຕ່ງຕັ້ງຄະນະຮັບຜິດຊອບສ້າງ ຫຼື ປັບປຸງກົດໝາຍ, ມີການເກັບກຳຂໍ້ມູນ, ມີການປຶກສາຫາລື ທາບທາມຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງ ຈົນຮອດການພິຈາລະນາຮັບຮອງ ແລະ ປະກາດໃຊ້, ເຮັດໃຫ້ກົດໝາຍທີ່ສ້າງ ແລະ ປັບປຸງ ມີຄຸນນະພາບຫຼາຍຂຶ້ນ. ແຕ່ເນື່ອງຈາກວ່າ ໃນປັດຈຸບັນ ມີການແຜ່ລະບາດຂອງພະຍາດໂຄວິດ-19 ຊຶ່ງລັດຖະບານ ໄດ້ວາງມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດດັ່ງກ່າວ ເຮັດໃຫ້ມີຄວາມຫຍຸ້ງຍາກ ໃນການປະຕິບັດຕາມຂັ້ນຕອນຂອງການສ້າງ ແລະ ປັບປຸງກົດໝາຍ ໂດຍສະເພາະ ການເກັບກຳຂໍ້ມູນມາຄົ້ນຄວ້າວິໄຈ ກ່ອນການລົງມືຂຽນເນື້ອໃນຂອງຮ່າງກົດໝາຍ, ການນຳເອົາຮ່າງກົດໝາຍໄປທາບທາມຄຳເຫັນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ສະນັ້ນ, ເພື່ອເຮັດໃຫ້ການສ້າງ ແລະ ປັບປຸງກົດໝາຍ ສາມາດດຳເນີນໄປຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມຂັ້ນຕອນຂອງການສ້າງ ແລະ ປັບປຸງກົດໝາຍ, ຮັບປະກັນໃຫ້ກົດໝາຍທີ່ສ້າງໃໝ່ ແລະ ປັບປຸງ ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ ພ້ອມທັງຮັບປະກັນດ້ານກຳນົດເວລາ ຕາມແຜນການທີ່ກຳນົດໄວ້, ກະຊວງຍຸຕິທຳ ໃນຖານະເປັນເສນາທິການໃຫ້ລັດຖະບານກ່ຽວກັບການສ້າງ ແລະ ປັບປຸງກົດໝາຍ ເຫັນວ່າ ມີຄວາມຈຳເປັນຕ້ອງໄດ້ແນະນຳຕື່ມໃນບາງບັນຫາ ກ່ຽວກັບຂັ້ນຕອນຂອງການສ້າງ ແລະ ປັບປຸງກົດໝາຍ.

## ລັດຖະມົນຕີ ກະຊວງຍຸຕິທຳ ອອກຄຳແນະນຳ:

### I. ຈຸດປະສົງ

ຄຳແນະນຳສະບັບນີ້ ວາງອອກ ເພື່ອແນະນຳກ່ຽວກັບ ການເກັບກຳຂໍ້ມູນມາຄົ້ນຄວ້າວິໄຈ ກ່ອນການລົງມືຂຽນເນື້ອໃນຂອງຮ່າງກົດໝາຍ, ການທາບທາມຄຳເຫັນໃສ່ຮ່າງກົດໝາຍ ໃນຂັ້ນຕອນການສ້າງຮ່າງກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນພາກທີ III ໝວດທີ 2 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ, ແນະນຳກ່ຽວກັບການປັບປຸງບາງມາດຕາຂອງກົດໝາຍ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍ ທີ່ສ້າງໃໝ່ ຫຼື ປັບປຸງ ໃນໄລຍະນີ້ ມີຄວາມຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້, ຮັບປະກັນໃຫ້ການດຳເນີນການສ້າງ ຫຼື ປັບປຸງກົດໝາຍ ທັນກຳນົດເວລາ ແລະ ແຜນການທີ່ກຳນົດໄວ້.

### II. ການສ້າງ ຫຼື ປັບປຸງກົດໝາຍ

ໃນການສ້າງ ຫຼື ປັບປຸງກົດໝາຍ ໃຫ້ອົງການຮັບຜິດຊອບສ້າງຮ່າງກົດໝາຍ ດຳເນີນການສ້າງ ຫຼື ປັບປຸງກົດໝາຍ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ຊຶ່ງໄດ້ກຳນົດລະອຽດ ແຕ່ມາດຕາ 20 ຫາ ມາດຕາ 58 ໃນພາກທີ III ດັ່ງນີ້:

1. ການສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຫາ ມາດຕາ 26 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ;
2. ການສ້າງຮ່າງກົດໝາຍ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຫາ ມາດຕາ 40 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ. ສຳລັບການເກັບກຳຂໍ້ມູນ ເພື່ອມາຄົ້ນຄວ້າວິໄຈ ກ່ອນການຂຽນເນື້ອໃນຂອງຮ່າງກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ແລະ ການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ນັ້ນ ໃຫ້ປະຕິບັດຕາມຂໍ້ III ແລະ IV ຂອງຄຳແນະນຳສະບັບນີ້ຕື່ມ;
3. ການກວດກາຄວາມສອດຄ່ອງຂອງຮ່າງກົດໝາຍໂດຍກະຊວງຍຸຕິທຳ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຫາ 42 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ;
4. ການພິຈາລະນາຮ່າງກົດໝາຍໂດຍລັດຖະບານ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຫາ 48 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ;
5. ການພິຈາລະນາ ແລະ ຮັບຮອງຮ່າງກົດໝາຍໂດຍສະພາແຫ່ງຊາດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ຫາ 56 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ;
6. ການປະກາດໃຊ້ກົດໝາຍໂດຍປະທານປະເທດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 57 ຫາ 58 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ.

### III. ການເກັບກຳຂໍ້ມູນ ເພື່ອມາຄົ້ນຄວ້າວິໄຈ

ການເກັບກຳຂໍ້ມູນ ເພື່ອມາຄົ້ນຄວ້າວິໄຈ ເປັນບັນຫາທີ່ສຳຄັນ ສຳລັບການສ້າງ ຫຼື ປັບປຸງກົດໝາຍ ເນື່ອງຈາກຂໍ້ມູນທີ່ເກັບກຳນັ້ນ ຈະເປັນພື້ນຖານໃຫ້ຄະນະຮັບຜິດຊອບສ້າງຮ່າງກົດໝາຍ ກຳນົດເປົ້າໝາຍດັດປັບ ຫຼື ເນື້ອໃນຂອງຮ່າງກົດໝາຍ ໄດ້ຢ່າງຖືກຕ້ອງ, ຊັດເຈນ ຮັບປະກັນໃຫ້ກົດໝາຍທີ່ສ້າງໃໝ່ ຫຼື ປັບປຸງ ມີຄຸນນະພາບ, ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້.

ສະນັ້ນ, ໃນການສ້າງ ຫຼື ປັບປຸງກົດໝາຍ ຄະນະຮັບຜິດຊອບສ້າງຮ່າງກົດໝາຍ ຕ້ອງດຳເນີນການເກັບກຳຂໍ້ມູນ ເພື່ອມາຄົ້ນຄວ້າວິໄຈ ກ່ອນການຂຽນເນື້ອໃນຂອງຮ່າງກົດໝາຍ.

ໃນກໍລະນີບໍ່ສາມາດລົງເກັບກຳຂໍ້ມູນຕົວຈິງ ຢູ່ກະຊວງ, ອົງການລັດທຽບເທົ່າກະຊວງ, ທ້ອງຖິ່ນ ແລະ ຮາກຖານທີ່ກ່ຽວຂ້ອງໄດ້ ເນື່ອງຈາກຕ້ອງໄດ້ປະຕິບັດມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ຄະນະຮັບຜິດຊອບສ້າງຮ່າງກົດໝາຍ ສາມາດເກັບກຳຂໍ້ມູນ ດ້ວຍວິທີການ ສົ່ງໜັງສືສະເໜີ ພ້ອມດ້ວຍແບບສອບຖາມ ໄປຍັງເປົ້າໝາຍທີ່ຕ້ອງການເກັບກຳຂໍ້ມູນ ຫຼື ສົ່ງຜ່ານລະບົບທັນສະໄໝ ເປັນຕົ້ນ G-Chat, E-mail, WhatsApp ຫຼື ຈັດກອງປະຊຸມທາງໄກ (Video Conference) ເພື່ອເກັບກຳຂໍ້ມູນ.

ໃນການເກັບກຳຂໍ້ມູນ ຄະນະຮັບຜິດຊອບສ້າງຮ່າງກົດໝາຍ ຕ້ອງໄດ້ກຳນົດ ເປົ້າໝາຍທີ່ຈະເອົາຂໍ້ມູນ ໃຫ້ຊັດເຈນວ່າມີອົງການ ຫຼື ພາກສ່ວນໃດແດ່, ຈາກນັ້ນ ໃຫ້ເຮັດໜັງສືສະເໜີໄປຍັງແຕ່ລະອົງການ ຫຼື ແຕ່ລະພາກສ່ວນ ໂດຍກຳນົດແຈ້ງ ກ່ຽວກັບຂໍ້ມູນທີ່ຕ້ອງການ, ບັນດາເອກະສານອ້າງອີງ, ສະຖິຕິ ຫຼື ຕົວເລກ ທີ່ກ່ຽວຂ້ອງກັບຂໍ້ມູນ ເພື່ອເຮັດໃຫ້ຂໍ້ມູນ ເຊື່ອຖືໄດ້, ພ້ອມກັນນັ້ນ ກໍຕ້ອງກຳນົດວັນ, ເວລາ ສົ່ງຂໍ້ມູນ ມາຍັງຄະນະຮັບຜິດຊອບສ້າງຮ່າງກົດໝາຍ.

## IV. ການທາບທາມຄຳເຫັນໃສ່ຮ່າງກົດໝາຍ

ການທາບທາມຄຳເຫັນໃສ່ຮ່າງກົດໝາຍ ເປັນບາດກ້າວໜຶ່ງທີ່ສຳຄັນ ໃນຂັ້ນຕອນການສ້າງຮ່າງກົດໝາຍ ແລະ ເປັນຫຼັກການພື້ນຖານຂອງການສ້າງກົດໝາຍ ເພື່ອຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ການເສີມຂະຫຍາຍປະຊາທິປະໄຕ ແລະ ຍາດແຍ່ງຄຳເຫັນຈາກທຸກພາກສ່ວນທີ່ກ່ຽວຂ້ອງ.

ການທາບທາມຄຳເຫັນໃສ່ຮ່າງກົດໝາຍ ໃຫ້ດຳເນີນ ດັ່ງນີ້:

**1) ການສົ່ງຮ່າງກົດໝາຍໃຫ້ພາກສ່ວນທີ່ກ່ຽວຂ້ອງປະກອບຄຳເຫັນ**

ການສົ່ງຮ່າງກົດໝາຍ ໃຫ້ພາກສ່ວນທີ່ກ່ຽວຂ້ອງປະກອບຄຳເຫັນ ສາມາດດຳເນີນຜ່ານລະບົບທັນສະໄໝ ເປັນຕົ້ນ G-Chat, E-mail, WhatsApp.

ໃນການສົ່ງຮ່າງກົດໝາຍ ໃຫ້ພາກສ່ວນທີ່ກ່ຽວຂ້ອງປະກອບຄຳເຫັນນັ້ນ ຄະນະຮັບຜິດຊອບສ້າງຮ່າງກົດໝາຍ ຕ້ອງເຮັດໜັງສືສະເໜີ ໂດຍກຳນົດເປົ້າໝາຍທາບທາມຄຳເຫັນ, ຄຳຖາມເຈາະຈີ້ມ, ວັນ, ເວລາ ສົ່ງຄຳເຫັນມາຍັງຄະນະຮັບຜິດຊອບສ້າງຮ່າງກົດໝາຍ ໃຫ້ລະອຽດ, ຈະແຈ້ງ.

ສຳລັບເປົ້າໝາຍທາບທາມຄຳເຫັນ ໃຫ້ອີງໃສ່ເນື້ອໃນຂອງກົດໝາຍທີ່ສ້າງ ຫຼື ປັບປຸງນັ້ນ ພົວພັນກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃດ ຊຶ່ງຕ້ອງໄດ້ກຳນົດໃຫ້ຈະແຈ້ງ ເປັນຕົ້ນ ກະຊວງການເງິນ ທີ່ພົວພັນກັບການເງິນ, ກະຊວງພາຍໃນ ທີ່ພົວພັນກັບກົງຈັກການຈັດຕັ້ງ, ກະຊວງການຕ່າງປະເທດ ທີ່ພົວພັນກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ, ກະຊວງ, ອົງການອື່ນ ທີ່ກ່ຽວຂ້ອງກັບເນື້ອໃນຂອງຮ່າງກົດໝາຍ.

ຄຳຖາມເຈາະຈີ້ມ ຕ້ອງຍົກໃຫ້ເຫັນບັນຫາທີ່ພົວພັນກັບຄວາມຮັບຜິດຊອບຂອງເປົ້າໝາຍທາບທາມຄຳເຫັນ ແລະ ບັນຫາອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຄວາມສອດຄ່ອງກົມກຽວກັບກົດໝາຍທີ່ກ່ຽວຂ້ອງ, ຄວາມຈຳເປັນໃນການຄຸ້ມຄອງລັດ ຄຸ້ມຄອງສັງຄົມ, ບົດບາດຍິງ-ຊາຍ, ການປະຕິບັດສິດ ແລະ ພັນທະຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

**2) ການຈັດກອງປະຊຸມປຶກສາຫາລື ທາບທາມຄຳເຫັນ**

ໃນການຈັດກອງປະຊຸມປຶກສາຫາລື ທາບທາມຄຳເຫັນໃສ່ຮ່າງກົດໝາຍ ໃຫ້ຄະນະຮັບຜິດຊອບສ້າງຮ່າງກົດໝາຍ ຫັນຈາກການຈັດກອງປະຊຸມປຶກສາຫາລືທາບທາມຄຳເຫັນໃສ່ຮ່າງກົດໝາຍແບບຊ້ອງໜ້າໂດຍກົງ ໄປເປັນກອງປະຊຸມທາງໄກ (Video Conference). ໃນກໍລະນີມີຄວາມຈຳເປັນຈັດກອງປະຊຸມແບບຊ້ອງໜ້າໂດຍກົງນັ້ນ ໃຫ້ປະຕິບັດຕາມມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ຄະນະສະເພາະກິດ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ວາງອອກໃນແຕ່ລະໄລຍະ ຢ່າງເຂັ້ມງວດ.

ການຈັດກອງປະຊຸມປຶກສາຫາລື ທາບທາມຄຳເຫັນໃສ່ຮ່າງກົດໝາຍ ຕ້ອງດຳເນີນໄປຄຽງຄູ່ກັບການສົ່ງຮ່າງກົດໝາຍໃຫ້ພາກສ່ວນທີ່ກ່ຽວຂ້ອງປະກອບຄຳເຫັນ ແລະ ສາມາດດຳເນີນຢູ່ສູນກາງ ແລະ ທ້ອງຖິ່ນ. ສຳລັບຢູ່ທ້ອງຖິ່ນ ອາດດຳເນີນເປັນພາກ ຫຼື ດຳເນີນເປັນແຕ່ລະແຂວງ ໂດຍອີງໃສ່ເງື່ອນໄຂຕົວຈິງ. ສຳລັບແຂວງໃດ ທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ຫັນມາຈັດກອງປະຊຸມຜ່ານລະບົບກອງປະຊຸມທາງໄກ (Video Conference).

ການຈັດກອງປະຊຸມປຶກສາຫາລື ທາບທາມຄຳເຫັນໃສ່ຮ່າງກົດໝາຍ ຕ້ອງກຳນົດຈຸດປະສົງ, ລະດັບຄາດໝາຍຂອງກອງປະຊຸມ, ເປົ້າໝາຍເຂົ້າຮ່ວມກອງປະຊຸມ ໃຫ້ລະອຽດ, ຈະແຈ້ງ; ພ້ອມກັນນັ້ນ ກໍຕ້ອງສົ່ງຮ່າງກົດໝາຍ ພ້ອມດ້ວຍຄຳຖາມເຈາະຈີ້ມ ແລະ ເອກະສານທີ່ກ່ຽວຂ້ອງ ເປັນຕົ້ນ ບົດສະເໜີຮ່າງກົດໝາຍ, ບົດປະເມີນຜົນກະທົບຂອງຮ່າງກົດໝາຍ ໃຫ້ເປົ້າໝາຍເຂົ້າຮ່ວມກອງປະຊຸມ ຢ່າງຊ້າ ຫ້າ ວັນ ກ່ອນວັນເປີດກອງປະຊຸມ ໂດຍສົ່ງຜ່ານລະບົບທັນສະໄໝ ຕາມທີ່ໄດ້ແນະນຳໃນຂໍ້ 1 ເທິງນີ້.

**3) ການທາບທາມຄຳເຫັນຜ່ານເວັບໄຊ**

ຄະນະຮັບຜິດຊອບສ້າງຮ່າງກົດໝາຍ ຕ້ອງນຳເອົາຮ່າງກົດໝາຍ ໄປທາບທາມຄຳເຫັນ ຢ່າງໜ້ອຍ ຫົກສິບວັນ ຕາມທີ່ໄດ້ກຳນົດໄວ້ໃນວັກສອງ ມາດຕາ 8 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ໂດຍຜ່ານເວັບໄຊຈົດໝາຍເຫດທາງລັດຖະການຂອງລັດຖະບານ ຫຼື ເວັບໄຊຂອງອົງການຮັບຜິດຊອບສ້າງຮ່າງກົດໝາຍ.

ໃນກໍລະນີນຳເອົາຮ່າງກົດໝາຍ ໄປທາບທາມຄຳເຫັນຜ່ານເວັບໄຊຈົດໝາຍເຫດທາງລັດຖະການຂອງລັດຖະບານ ໃຫ້ປະຕິບັດຕາມວິທີການ ແລະ ຂັ້ນຕອນການນຳເອົາຮ່າງກົດໝາຍ ລົງໃນເວັບໄຊຈົດໝາຍເຫດທາງລັດຖະການນັ້ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 1106/ກຍ, ລົງວັນທີ 10 ຕຸລາ 2017 ວ່າດ້ວຍການຄຸ້ມຄອງຈົດໝາຍເຫດທາງລັດຖະການ.

ໃນກໍລະນີ ມີເວັບໄຊສະເພາະຂອງອົງການຮັບຜິດຊອບສ້າງຮ່າງກົດໝາຍ ກໍສາມາດນຳເອົາຮ່າງກົດໝາຍໄປທາບທາມຄຳເຫັນຜ່ານເວັບໄຊຂອງອົງການຕົນ ໄດ້.

ການນຳເອົາຮ່າງກົດໝາຍ ໄປທາບທາມຄຳເຫັນຜ່ານເວັບໄຊນັ້ນ ຕ້ອງມີ ຄຳຖາມເຈາະຈີ້ມ, ບົດສະເໜີຮ່າງກົດໝາຍ ແລະ ບົດປະເມີນຜົນກະທົບຂອງຮ່າງກົດໝາຍ.

## V. ການປັບປຸງບາງມາດຕາຂອງກົດໝາຍ

ການປັບປຸງບາງມາດຕາຂອງກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນ ວັກສາມ ມາດຕາ 2 ແລະ ມາດຕາ 10 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ສາມາດດຳເນີນດ້ວຍວິທີການ ດັ່ງນີ້:

- ການປັບປຸງບາງມາດຕາຂອງກົດໝາຍສະບັບດຽວ;
- ການປັບປຸງກົດໝາຍຫຼາຍສະບັບພ້ອມກັນ.

### 1. ການປັບປຸງບາງມາດຕາຂອງກົດໝາຍສະບັບດຽວ

ການປັບປຸງບາງມາດຕາຂອງກົດໝາຍສະບັບດຽວ ແມ່ນການປັບປຸງສະເພາະມາດຕາທີ່ມີຄວາມຈຳເປັນຂອງກົດໝາຍໃດໜຶ່ງ ຊຶ່ງຈຳນວນມາດຕາທີ່ປັບປຸງບໍ່ຫຼາຍ, ບໍ່ປ່ຽນແປງໂຄງປະກອບຂອງກົດໝາຍສະບັບທີ່ນຳໃຊ້ໃນປັດຈຸບັນ ໂດຍອອກເປັນກົດໝາຍໃໝ່ ເອີ້ນວ່າ "ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍ".

ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍນີ້ ຈະບໍ່ໄປປ່ຽນແທນກົດໝາຍສະບັບທີ່ນຳໃຊ້ໃນປັດຈຸບັນ ແຕ່ຈະປ່ຽນແທນສະເພາະມາດຕາທີ່ໄດ້ປັບປຸງ ໃນກົດໝາຍສະບັບທີ່ນຳໃຊ້ໃນປັດຈຸບັນ ເທົ່ານັ້ນ.

ເຕັກນິກການປັບປຸງບາງມາດຕາຂອງກົດໝາຍສະບັບດຽວ ມີດັ່ງນີ້:

- ການໃສ່ຊື່ກົດໝາຍ ໃນກໍລະນີເນື້ອໃນທີ່ປັບປຸງມີຫຼາຍມາດຕາ ໃຫ້ໃສ່ວ່າ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍນັ້ນ, ຕົວຢ່າງ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ສະບັບເລກທີ 89/ສພຊ, ລົງວັນທີ 13 ພະຈິກ 2020; ໃນກໍລະນີເນື້ອໃນທີ່ປັບປຸງມີໜ້ອຍມາດຕາ ໃຫ້ຂຽນແຈ້ງວ່າ ປັບປຸງມາດຕາໃດ ຂອງກົດໝາຍນັ້ນ, ຕົວຢ່າງ ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 80/ສພຊ, ລົງວັນທີ 4 ທັນວາ 2019;
- ໂຄງປະກອບຂອງຮ່າງກົດໝາຍ ມີລັກສະນະງ່າຍດາຍ ບໍ່ມີພາກ ຫຼື ໝວດ;
- ການໃສ່ເລກລຳດັບມາດຕາ ໃຫ້ເອົາຕາມເລກລຳດັບຕາມມາດຕາຂອງກົດໝາຍສະບັບທີ່ນຳໃຊ້ໃນປັດຈຸບັນ. ໃນກໍລະນີ ເພີ່ມມາດຕາໃໝ່ ໃຫ້ໃສ່ເລກລຳດັບມາດຕາເກົ່າ ແລ້ວຂີດທັບເລກລຳດັບມາດຕາເກົ່ານັ້ນ, ຕົວຢ່າງ ມາດຕາ 61/1 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020.

**2. ການປັບປຸງກົດໝາຍຫຼາຍສະບັບພ້ອມກັນ**

ການປັບປຸງກົດໝາຍຫຼາຍສະບັບພ້ອມກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ແມ່ນການປັບປຸງບາງມາດຕາຂອງກົດໝາຍຫຼາຍສະບັບພ້ອມກັນ ທີ່ມີເນື້ອໃນຂອງກົດໝາຍທີ່ຈະປັບປຸງນັ້ນ ບໍ່ຫຼາຍ ແລະ ມີສ່ວນພົວພັນກັນ.

ການປັບປຸງກົດໝາຍຫຼາຍສະບັບພ້ອມກັນນີ້ ຈະໂຮມເອົາມາດຕາທີ່ປັບປຸງນັ້ນ ເຂົ້າເປັນກົດໝາຍສະບັບດຽວ ເອີ້ນວ່າ "ກົດໝາຍວ່າດ້ວຍການປັບປຸງກົດໝາຍ...", ຕົວຢ່າງ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 84/ສພຊ, ລົງວັນທີ 1 ກໍລະກົດ 2020. ກົດໝາຍວ່າດ້ວຍການປັບປຸງກົດໝາຍຫຼາຍສະບັບພ້ອມກັນນີ້ ຈະປ່ຽນແທນສະເພາະມາດຕາທີ່ມີການປັບປຸງໃນກົດໝາຍສະບັບທີ່ນຳໃຊ້ໃນປັດຈຸບັນນັ້ນ.

ເຕັກນິກການປັບປຸງກົດໝາຍຫຼາຍສະບັບພ້ອມກັນ ໃຫ້ປະຕິບັດຄືກັນກັບການປັບປຸງບາງມາດຕາຂອງກົດໝາຍສະບັບດຽວ ແຕ່ການໃສ່ຊື່ກົດໝາຍ ໃຫ້ຂຽນແຈ້ງເລີຍວ່າ ປັບປຸງບາງມາດຕາຂອງກົດໝາຍໃດແດ່.

## VI. ການສ້າງລັດຖະບັນຍັດຂອງປະທານປະເທດ ແລະ ດຳລັດຂອງລັດຖະບານ

ໃນການສ້າງລັດຖະບັນຍັດຂອງປະທານປະເທດ ແລະ ດຳລັດຂອງລັດຖະບານ ອົງການຮັບຜິດຊອບສ້າງນິຕິກຳດັ່ງກ່າວ ສາມາດນຳໃຊ້ວິທີການ ເກັບກຳຂໍ້ມູນ ເພື່ອມາຄົ້ນຄວ້າວິໄຈ ແລະ ການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ III ແລະ IV ຂອງຄຳແນະນຳສະບັບນີ້.

## VII. ການຈັດຕັ້ງປະຕິບັດ

ມອບໃຫ້ກົມກົດໝາຍ ກະຊວງຍຸຕິທຳ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.

ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຫາກວ່າມີຄວາມຫຍຸ້ງຍາກ ໃຫ້ປະສານສົມທົບກັບກົມກົດໝາຍກະຊວງຍຸຕິທຳ ເພື່ອປຶກສາຫາລື ແລະ ແນະນຳວິທີແກ້ໄຂ ໃຫ້ທັນເວລາ.

**VIII.** ຜົນສັກສິດ

ຄໍາແນະນໍາສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ເປັນຕົ້ນໄປ ຈົນກວ່າຈະສິ້ນສຸດການຈັດຕັ້ງປະຕິບັດຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ15/ນຍ, ລົງວັນທີ 21 ເມສາ 2021.

ລັດຖະມົນຕີ

ໄພວີ ສີບົວລີພາ